# ນາງແພດປະຕິວັດ

## ຊີວິດຕິດພັນກັບໂຮງໝໍ 101 ວີຣະຊົນ




ຄຳເມືອງ ວໍລະຈິດ

27. 7. 2012

# ຄະນະຜູ້ຈັດພິມ

............................

**ຮວບຮວມ, ຂຽນ ແລະບັນນາທິການ:**

ຄຳອອນ ເພັດດາວເຮືອງ

ຫົງເຫີນ ຂຸນພິທັກ

**ຖ່າຍຮູບພາບ**

ຄຳອອນ ເພັດດາວເຮືອງ

ຫົງເຫີນ ຂຸນພິທັກ

ດວງມາລາ ຣາຊະວົງໄຊ

ບຸນທົງ ຍົດໝັ້ນຄົງ

**ຕີພິມ-ອອກແບບ-ຈັດໜ້າ**

ດວງມາລາ ຣາຊະວົງໄຊ

**ຈັດພິມໂດຍ:**

ຄຳເມິງ ວໍລະຈິດ  ພ້ອມດ້ວຍຄອບຄົວ

ເພື່ອເປັນທີ່ລະນຶກ ໃນໂອກາດມອບ-ຮັບຕຶກພິເສດໂຮງໝໍ 101 ວິລະຊົນ

ເມືອງແປກ ແຂວງຊຽງຂວາງ

ຈຳນວນພິມ 2.000 ຫົວ

**ຂໍ້ມູນທາງບັນນານຸກົມ ຂອງຫໍສະໝຸດແຫ່ງຊາດລາວ**

ຄຳອອນ ເພັດດາວເຮືອງ
ຊີວິດຕິດພັນກັບໂຮງໝໍ 101 ວິລະຊົນ /ຄຳອອນ ເພັດດາວເຮືອງ.--ວຽງຈັນ:
ໂຮງພິມມັນທາຕຸລາດ, 2012
120 ໜ້າ: ພາບປະກອບສີ 21 ຊມ
1. ຊີວິດ ແລະ ຜົນງານ. I. ເລື່ອງ

923.7--dc21
ISBN 978-9932-00-036-4

# ຊີວິດ ຕິດພັນກັບ
# ໂຮງໝໍ 101 ວິຣະຊົນ



# ສາລະບັນເລື່ອງ ໜ້າ


ບົດບັນນາທິການ 7
ຝາກໄວ້ ເປັນອະນຸສອນ 9

**ການມອບ-ຮັບຕຶກນອນຄົນເຈັບພິເສດ**
ໃບສະເໜີ ຂໍລະດົມທຶນ 13
ບົດກ່າວມອບ ອາຄານ ຕຶກນອນພິເສດ 14
ບົດກ່າວຳຮບ ອາຄານ ຕຶກນອນພິເສດ 20
ຄຳຂອງຫົວໜ້າກົມເສນາຮັກ 25
ສະພາບການພັດທະນາ ໂຮງໝໍ 101 28
ລາຍຊື່ ຜູ້ປະກອບທຶນ ສ້າງຕຶກພິເສດ 38
ບົດກະວີ: ມະຫາກຸສົນ 40

**ເລື່ອງເລົ່າ ຈາກສົງຄາມ ຂອງບັນດານ່ງແພດ**
ນ້ຳໃຈແມ່ (1) 43
ອ່ານກອນນີ້ກ່ອນ 44
ບົດເພງ ແພດປະຕິວັດ 47

ການເມືອງ ເປັນພື້ນຖານ ວິຊາການເປັນສຳຄັນ 49
ທວນຄືນເຂດການເຄື່ອນໄຫວໃນອະດີດ 69
ທ່ານທອງໄຫຼ ມີທອງ ໜຶ່ງໃນຄະນະອຳນວຍການ 79

ເລື່ອງຈາກບັນດານາງແພດ ໂຮງໝໍ 01 84-109
ຮັກຄົນເຈັບຄືລູກ ຮັກຄົນເຈັບ ຄືຮັກປະເທດຊາດ 110
ພູມໃຈ ທີ່ໄດ້ຮູ້ຈັກ 128
ນ້ຳໃຈແມ່ (2) 131
ໃຜໆ ກໍຢາກນັ່ງເທິງຄໍຊ້າງ 138

# ບົດບັນນາທິການ

ປື້ມຫົວນີ້ ນັບເປັນຫົວທີສາມແລ້ວ ທີ່ພວກເຮົາຄະນະບັນນາທິການໄດ້ຮັບຄວາມໄວ້ວາງໃຈ ແລະມອບໝາຍຈາກ ປ້າຄຳເມິງ ວໍລະຈິດ ໃຫ້ເປັນຜູ້ຮວບຮວມຂໍ້ມູນຂຽນ ບັນນາທິການ ແລະຈັດພິມຂຶ້ນ ເພື່ອແຈກຢາຍ ເປັນອະນຸສອນໃນການມອບ-ຮັບໂຄງ ການປະກອບສ່ວນພັດທະນາທີ່ເພິ່ນເຕົ້າໂຮມທຶນນຳພາສ້າງ

ຫົວທຳອິດແມ່ນ **"ແທນຄຸນແຜ່ນດິນ ຖິ່ນໃຫ້ກຳເນີດ"**

ຫົວທີສອງ **"ປະຫວັດ ແລະມູນເຊື້ອການສຶກສາໃນເຂດຍອດງື່ມ - ຄັງວຽງ"**

**ທັງສອງ**ຈັດພິມຂຶ້ນແລະແຈກຢາຍໃນໂອກາດມອບ-ຮັບອາຄານຮຽນ ໂຮງຮຽນມັດທະຍົມສົມບູນອິນແປງ ເຂດຄັງວຽງ ເມື່ອວັນທີ 5 ພະຈິກ 2010

ສຳລັບປື້ມຫົວທີສາມນີ້ ຈັດພິມຂຶ້ນເພື່ອເປັນອະນຸສອນໃນໂອກາດມອບ-ຮັບຕຶກພິເສດ ແລະຕຶກປະສູດ ໃຫ້ແກ່ໂຮງໝໍບໍລິເວນ 101 ວິຣະຊົນ ແລະມອບ-ຮັບອາຄານຮຽນໂຮງຮຽນ ມັດທະຍົມຕອນຕົ້ນ ບ້ານ ນາຟ້າ

ເນື້ອໃນຂອງປື້ມນີ້ ແບ່ງເປັນສາມສ່ວນ

ສ່ວນທີນຶ່ງ ເປັນການຮວບຮວມເອົາບົດຄຳເຫັນກ່າວມອບ-ຮັບຕຶກພິເສດ ແລະຕຶກປະສູດໃຫ້ແກ່ໂຮງໝໍ 101 ວິລະຊົນ ຂໍ້ມູນ ແລະ ຄວາມຄິດເຫັນຂອງບຸກຄົນທີ່ກ່ຽວຂ້ອງ

ແລະສ່ວນທີສອງ ເປັນປະຫວັດສ່ວນນຶ່ງ ຂອງປ້າຄຳເມິງ ວໍລະຈິດ ແລະຂອງເພື່ອນນັກຮົບຮ່ວມອາຊີບ ໃນການເຄື່ອນໄຫວເຮັດໜ້າທີ່ແພດ ຊຶ່ງຕິດພັນຢູ່ກັບໂຮງໝໍ 101 ສະໄໝສົງຄາມຕໍ່ສູ້ກູ້ຊາດ

ສ່ວນທີສາມ ເປັນບົດຂຽນ ບົດກະວີຂອງນັກຂຽນ ນັກປະພັນບາງທ່ານ.

ເນື້ອໃນຂອງປື້ມນີ້ ນອກຈາກຍົກໃຫ້ເຫັນຂໍ້ມູນ ໃນການປະກອບສ່ວນສ້າງສາພັດທະນາໂຮງຮຽນ ໂຮງໝໍແລ້ວ ຍັງມີຄວາມຮູ້ສຶກນຶກຄິດຂອງການຈັດຕັ້ງ ຂອງບຸກຄົນທີ່ມີຕໍ່ປ້າຄຳເມິງ ແລະການສ້າງສາພັດທະນາໃນເທື່ອນີ້ ພິເສດບົດຂຽນຫຼາຍບົດ ແມ່ນເປັນຄຳນິຍົມຊົມເຊີຍ ແລະຊີ້ໃຫ້ເຫັນແນວຄິດຈິດໃຈ ອັນປະເສີດ ຄຸນສົມບັດ ຄວາມຫວັງດີ ຄວາມເປັນຫ່ວງເປັນໃຍ ອັນໃຫຍ່ຫຼວງຊຶ່ງມີມາຕັ້ງແຕ່ຍັງເຍົາໄວ ຕາບເທົ່າເຖິງປັດຈຸບັນຂອງປ້າ ທີ່ມີຕໍ່ບ້ານເກີດເມືອງນອນ ແລະພໍ່ແມ່ພີ່ນ້ອງຊາວພວນ ກໍຄືລາວທົ່ວໄປ.

ການຈັດພິມປຶ້ມຫົວນີ້ ມີຄວາມສະດວກກວ່າສອງຫົວກ່ອນ ເພາະໄດ້ມີຄວາມເຂົ້າໃຈກັນຫຼາຍຂຶ້ນລະຫວ່າງ ປ້າຄຳເມິງ ແລະຄະນະຜູ້ຈັດພິມ ແຕ່ກໍມີຄວາມຍາກກວ່າສອງຫົວກ່ອນຢູ່ບ່ອນວ່າ ມັນມີຫຼາຍສ່ວນ ດັ່ງທີ່ກ່າວແລ້ວ ໃນເມື່ອມີຫຼາຍສ່ວນກໍຍ່ອມມີຫຼາຍເຫດການ ມີຫຼາຍຄົນ-ຫຼາຍຄວາມຄິດເຫັນ ແລະຫຼາຍຮູບພາບ ດັ່ງນັ້ນການຂຽນ ການຄັດຈ້ອນຮ້ອຍຮຽງ ເອົາເນື້ອໃນໃຈຄວາມຈາກຫຼາຍຄຳເວົ້າ ແນວຄິດຈິດໃຈ ແລະຮູບພາບການເຄື່ອນໄຫວມາລົງໃສ່ໜ້າເຈ້ຍທີ່ມີຈຳກັດ ຈຶ່ງເປັນສິ່ງທ້າທາຍແລະພາລະແບກຫາບ ສຳລັບຜູ້ຕີພິມ ຜູ້ອອກແບບ ແລະບັນນາທິການ.

ພວກເຮົາຫວັງວ່າປຶ້ມນ້ອຍຫົວນີ້ ຈະໃຫ້ປະໂຫຍດແກ່ຜູ້ອ່ານ ໂດຍສະເພາະແມ່ນຈະໄດ້ເຫັນແນວຄວາມຄິດນ້ຳຈິດນ້ຳໃຈ ທີ່ເປັນຫ່ວງເປັນໃຍບ້ານເກີດເມືອງນອນແລະພີ່ນ້ອງລູກຫຼານຂອງປ້າຄຳເມິງ ແລະຂອງບັນດາທ່ານທີ່ສົມທົບທຶນຊຶ່ງສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດແລະທຸກພາກສ່ວນສັງຄົມ ທີ່ຍາມໃດກໍເປັນຫ່ວງເປັນໃຍຕໍ່ປະເທດຊາດ ແລະປະຊາຊົນເມື່ອມີໂອກາດມີເງື່ອນໄຂກໍໄດ້ບໍ່ແບ່ງໃຫ້ການຊ່ວຍເຫຼືອດ້ວຍທຶນຮອນ ດ້ວຍສະຕິປັນຍາ ດ້ວຍເຫື່ອແຮງ ແລະດ້ວຍການອຳນວຍຄວາມສະດວກດ້ານຕ່າງໆ.

ຄວາມດີ ຄວາມງາມ ອັນເກີດມີຈາກປຶ້ມຫົວນີ້ ພວກເຮົາຂໍມອບເປັນທຶນສົມທົບເຂົ້າໃນການສ້າງສາພັດທະນາປະເທດຊາດ ແລະເທີດທູນບູຊາກຽດສັກສີຂອງບັນພະບຸລຸດ ໃນແຜ່ນດິນເມືອງພວນວິລະຊົນ ແຕ່ຫາກມີຄວາມຂາດຕົກບົກພ່ອງປະການໃດພວກເຮົາຂໍນ້ອມຮັບເອົາຄຳຕຳນິຕິຊົມທຸກປະການ.

ດ້ວຍຄວາມເຄົາລົບ ແລະຮັກແພງ
ຈາກໃຈຂອງຄະນະບັນນາທິການ
ຫົງເຫີນ ຊຸນພິທັກ





## ຝາກໄວ້ເປັນອະນຸສອນ

..............................................

ດ້ວຍຄວາມກະຕັນຍູຕໍ່ແຜ່ນດິນຖິ່ນກຳເນີດ.
ດ້ວຍຄວາມເຄົາລົບສຳນຶກໃນບຸນຄຸນຂອງຄູບາອາຈານ
ທີ່ໄດ້ຖ່າຍທອດວິຊາຄວາມຮູ້ໃຫ້ເປັນພື້ນຖານແກ່ຊີວິດ
ແລະ ດ້ວຍຄວາມກະຕັນຍູ ຮູ້ຄຸນຕໍ່ ພັກ ຕໍ່ການປະຕິວັດ
ແລະຫ່ວງໃຍຕໍ່ສຸຂະພາບຂອງ ນາຍ ແລະ ພົນທະຫານ
ກໍຄືພໍ່ແມ່ ປະຊາຊົນ

24/ขาย

ຂ້າພະເຈົ້າ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ກຳເນີດບົນຜືນແຜ່ນດິນທີ່ອຸດົມສົມບູນທາງທຳມະຊາດ ມີປະຫວັດສາດ ແລະວັດທະນະທຳອັນຮັ່ງມີ ສະຫງ່າງາມ ແລະເຕັມໄປດ້ວຍມູນເຊື້ອແຫ່ງອະລິຍະທຳອັນຫຼາກຫຼາຍ, ເຕັມໄປດ້ວຍການທົດສອບ ແລະທ້າທາຍຫຼາຍປະການຈາກເສິກສົງຄາມ ບໍ່ວ່າແຕ່ຍຸກສະໄໝໃດ, ແຕ່ໃນເມື່ອມີພັກນຳພາແລ້ວ ການຕໍ່ສູ້ຂອງປະຊາຊົນລາວ ກໍໄດ້ຮັບໄຊຊະນະເປັນລຳດັບມາ ຈົນສາມາດໄດ້ຮັບໄຊຊະນະຢ່າງສົມບູນ ແລະສະຖາປະນາປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນປີ 1975.

ห้ามจำหน่าย

ສຳລັບປະຊາຊົນຊາວຊຽງຂວາງເຮົາ ກໍໄດ້ຜະເຊີນກັບສົງຄາມທຳລາຍຢ່າງຮ້າຍກາດ ໃນບັ້ນຮົບຕ່າງໆທີ່ພວກຈັກກະພັດຜູ້ຮຸກຮານກໍ່ຂຶ້ນ. ຂ້າພະເຈົ້າກໍແມ່ນໜຶ່ງໃນຈຳນວນນັກຮົບປະຕິວັດ ໃນເຄື່ອງແບບຂອງນັກຮົບເສື້ອຂາວນັ້ນຄືແພດປະຕິວັດ, ໄດ້ຕໍ່ສູ້ປົກປ້ອງຜືນແຜ່ນດິນແມ່ ໄດ້ເຂົ້າຮ່ວມ ແລະຮັບໃຊ້ບັ້ນຮົບຕ່າງໆ ເຊັ່ນ: ບັ້ນຮົບໂອເດແອນ, ບັ້ນຮົບກູ້ກຽດ, ບັ້ນຮົບທະນົງກຽດ ແລະ ບັ້ນຮົບບໍ່ຕ່າວຄືນ ທີ່ພວກສັດຕູຜູ້ຮຸກຮານ ໄດ້ເຜົາຜານຊຽງຂວາງເຮົາໃຫ້ກາຍເປັນເຖົ່າຖ່ານ. ພໍ່ແມ່ພີ່ນ້ອງ ໄດ້ລົ້ມຫາຍຕາຍຈາກ, ໄດ້ພັດພາກກັນໄປ ຄົນລະແຫ່ງລະຫົນ, ແຕ່ຍ້ອນການຕໍ່ສູ້ປົກປ້ອງປິຕຸພູມຂອງພວກເຮົາ ແມ່ນການຕໍ່ສູ້ທີ່ເປັນທຳ ໃນທີ່ສຸດກໍໄດ້ຮັບໄຊຊະນະ ລວມກັບປະຊາຊົນລາວໃນທົ່ວປະເທດ. ການເປັນແພດຮັບໃຊ້ບັ້ນຮົບທີ່ດຸເດືອດນັ້ນ ຈະມີບົດເລົ່າເລື່ອງໂດຍຫຍໍ້ໃຫ້ຜູ້ອ່ານໄດ້ຮັບຊາບໃນບົດຕໍ່ໆ ໄປ



ພາຍໃຕ້ການນຳພາ ຂອງພັກປະຊາຊົນລາວ, ປະຕິບັດຕາມແຜນພັດທະນາເສດຖະກິດສັງຄົມ ຂອງລັດຖະບານວາງອອກ, ຄຽງຄູ່ກັບປະຊາຊົນລາວ ໃນທົ່ວປະເທດ ຊາວຊຽງຂວາງພວກເຮົາຜູ້ລອດລົ້ມ ເຫຼືອຕາຍ ຈຶ່ງໄດ້ຫຼົບລ່າວຕ່າວກັບມາ ຈາກທຸກສາລະທິດ ເພື່ອຟື້ນຟູເສດຖະກິດ ຊີວິດ-ສັງຄົມໃນທຸກດ້ານ, ເຮືອນຊານບ້ານຊ່ອງ, ວັດວາອາຮາມ, ໂຮງຮຽນ ໂຮງໝໍ ໄດ້ຈົ່ງູມ ແລະເບັ່ງບານທົ່ວຜືນແຜ່ນດິນພວນ. ສະໝໍລະພູມຮົບ ຊຸມລະເບີດ, ຊຸມຫຼົບໄພ ກໍຄ່ອຍໆ ລຶບຖົມໄປດ້ວຍທຳມະຊາດ,

ເພື່ອປະກອບສ່ວນໃນການຮຳບາດແຜສົງຄາມ ແລະການສ້າງສາພັດທະນາເສດຖະກິດ ສັງຄົມ ໃນຊຽງຂວາງ ເວົ້າລວມ, ເວົ້າສະເພາະໃນທ້ອງຖິ່ນດິນກຳເນີດຂອງຕົນ, ນັບແຕ່ປີ 2001 ເປັນຕົ້ນມາ ຂ້າພະເຈົ້າພ້ອມດ້ວຍຄອບຄົວລູກເຕົ້າ ແລະຍາດຕິພີ່ນ້ອງ ຈຶ່ງໄດ້ເຕົ້າໂຮມທຶນຈຳນວນໜຶ່ງ ມາພັດທະນາໂຮງຮຽນ “ອິນແປງ” ເຂດຄັງວຽງຍົກລະດັບຂຶ້ນໃຫ້ມີມາດຕະຖານດີພໍສົມຄວນ ເພື່ອໃຫ້ລູກຫຼານໃນເຂດຄັງວຽງໄດ້ມີຄວາມອຸ່ນອຽນໃຈ ແລະສະດວກໃນການຮຽນນັບແຕ່ຊັ້ນອະນຸບານ ເຖິງຊັ້ນມັດທະຍົມສົມບູນ.

ຕໍ່ມາ ອີງຕາມຄວາມຮຽກຮ້ອງຕ້ອງການ ຂອງຄະນະອຳນວຍການໂຮງໝໍ 101 ບໍລິເວນ ແລະຄວາມຮຽກຮ້ອງຂອງພໍ່ແມ່ປະຊາຊົນ ບ້ານຊອຍນາຟ້າ ຂ້າພະເຈົ້າຈຶ່ງໄດ້ເຕົ້າໂຮມທຶນມາສ້າງຕຶກພິເສດ ແລະຕຶກປະສູດໂຮງໝໍ 101 ແລະອາຄານໂຮງຮຽນມັດທະຍົມ ຕອນຕົ້ນ ບ້ານຊອຍນາຟ້າອີກຕື່ມ




ໃນໂອກາດມອບ-ຮັບສິ່ງກໍ່ສ້າງໃຫ້ແກ່ໂຮງຮຽນອິນແປງນັ້ນ ຂ້າພະເຈົ້າພ້ອມດ້ວຍຄອບຄົວ ກໍໄດ້ຈັດພິມປຶ້ມອະນຸສອນ ແລ້ວສອງຫົວໄວ້ໃຫ້ໂຮງຮຽນ ເຂດຄັງວຽງ (ອິນແປງ) ແລະໂຮງຮຽນເຂດຍອດງື່ມ (ບ້ານຄາຍ) ຊຶ່ງເມື່ອກ່ອນນີ້ບ້ານເມືອງຮຽກກັນວ່າຕາແສງຄັງ ແລະຕາແສງຄາຍ ດິນແດນຖິ່ນກຳເນີດຂອງບັນພະບຸລຸດຊາວພວນພວກເຮົານັ້ນຄື ລຸງພູມີ ວົງວິຈິດ ໜຶ່ງໃນບັນດາຜູ້ນຳ ທີ່ເຄົາລົບຮັກຂອງປະຊາຊົນລາວກໍຄື ລູກຫຼານຊາວພວນພວກເຮົາ. ປຶ້ມອະນຸສອນເພື່ອການສຶກສາທັງສອງຫົວນັ້ນ ມີເນື້ອໃນສ່ອງແສງເຖິງມູນເຊື້ອ ແລະການເຕີບໃຫຍ່ຂະຫຍາຍຕົວຂອງວຽກງານການສຶກສາ ໃນທັງສອງເຂດ (ບົນດິນແດນເມືອງຄັງ).

ແລະມາບັດນີ້ ເພື່ອເປັນອະນຸສອນ ໃນການມອບ-ຮັບຕຶກພິເສດ ໂຮງໝໍ 101 ວິລະຊົນ ຂ້າພະເຈົ້າ ຈຶ່ງໄດ້ຈັດພິມປຶ້ມຫົວນີ້ຂຶ້ນມາ ຊຶ່ງເນື້ອໃນເລົ່າເຖິງຊີວິດແພດ ທັງຂອງຕົນເອງ ແລະໝູ່ເພື່ອນຈຳນວນໜຶ່ງ ຊຶ່ງເຄີຍຮັບໃຊ້ຕິດພັນຢູ່ກັບໂຮງໝໍແຫ່ງນີ້ໃນປາງສົງຄາມ ດ້ວຍຫວັງວ່າມັນຈະເປັນປະໂຫຍດແກ່ລູກຫຼານ ແລະຜູ້ອ່ານທົ່ວໄປ

ຄຳເມີງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ປ້ອງກັນປະເທດ

ໂຮງໝໍ ບໍລິເວນ 101

ເລກທີ /ຮໝ

ວັນທີ 26 ເມສາ 2011

ກົມ ເສນາຮັກ

ເລກທີ: 487

ວັນທີ 3/5/2011

# ໃບສະເໜີ

ຮຽນເຖິງ: ພະນະທ່ານ ບຸນຍັງ ວໍລະຈິດ ຮອງປະທານປະເທດ ທີ່ເຄົາລົບຮັກ.

(ໂດຍຜ່ານ ການຈັດຕັ້ງທີ່ກ່ຽວຂ້ອງ ທຸກພາກສ່ວນ).

**ເລື່ອງ:** ຂໍການລະດົມທຶນ ອຸປະຖຳ ກໍ່ສ້າງ: ***ຕຶກນອນຄົນເຈັບພິເສດ 10 ຫ້ອງນອນ*** ຢູ່ໂຮງໝໍ ບໍລິເວນ **101.**

- ອີງໃສ່ຂໍ້ຕົກລົງຂອງກະຊວງ ປ້ອງກັນປະເທດ ສະບັບເລກທີ່ 229 ລົງວັນທີ 05 ເດືອນ 02 ປີ 2001 ວ່າດ້ວຍການອະນຸມັດໂຮງໝໍ 101 ເປັນໂຮງໝໍ ບໍລິເວນ 101 ຮັບຜິດຊອບ 02 ແຂວງ: ຊຽງຂວາງ-ຫົວພັນ.
- ອີງໃສ່ການຕົກລົງ ເຫັນດີເປັນ ເອກະພາບຂອງຄະນະພັກ-ຄະນະອຳນວຍການ ໂຮງໝໍ ພ້ອມດ້ວຍ ພະນັກງານ-ນັກຮົບໃນໂຮງໝໍ ບໍລິເວນ 101.
- ອີງໃສ່ຄວາມຮຽກຮ້ອງ ຕ້ອງການຂອງໜ້າທີ່ວຽກງານ ໃນສະເພາະໜ້າ ແລະ ຍາວນານ ເພື່ອເຮັດສຳເລັດໜ້າທີ່ວຽກງານດູແລ,ຮັກສາສຸຂະພາບ ການປິ່ນປົວ ພະນັກງານການນຳ,ທະຫານ,ຕຳຫຼວດ ແລະພໍ່ແມ່ປະຊາຊົນບັນດາເຜົ່າ ໃຫ້ມີ ສຸຂະພາບແຂງແຮງ. ແຕ່ພື້ນຖານ ເສດຖະກິດ,ທຶນຮອນ ຂອງໂຮງໝໍ ບໍ່ມີພຽງພໍທີ່ຈະຕອບສະໜອງກັບຄວາມຮຽກຮ້ອງ ຕ້ອງການອັນຈຳເປັນຂອງ ສັງຄົມໄດ້ ເພາະເປັນໂຮງໝໍທີ່ຫາກໍ່ສ້າງຕັ້ງຂຶ້ນໃໝ່.

ດັ່ງນັ້ນ ທາງຄະນະພັກ-ຄະນະອຳນວຍການໂຮງໝໍ ບໍລິເວນ 101 ຈຶ່ງໄດ້ເອກະພາບກັນ ນຳສະເໜີຂຶ້ນເຖິງ ພະນະທ່ານ **ຮອງປະທານປະເທດ ແຫ່ງ ສ.ປ.ປ ລາວ ພ້ອມດ້ວຍຄອບຄົວ** ເພື່ອຊ່ວຍ ລະດົມທຶນ ອຸປະຖຳເປັນເງິນ ຫຼືເປັນວັດຖຸ ພັດທະນາ ປັບປຸງ ກໍ່ສ້າງ ໂຮງໝໍ ບໍລິເວນ 101 **ວິລະຊົນຂອງຊາດ**ເວົ້າລວມ,ເວົ້າສະເພາະ ແມ່ນ ກໍ່ສ້າງ ***ຕຶກນອນຄົນເຈັບພິເສດ 10 ຫ້ອງນອນ*** ຮັບໃຊ້ປິ່ນປົວ ພະນັກງານຂັ້ນນຳ, ທະຫານ,ຕຳຫຼວດ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ໃຫ້ນັບມື້ນັບທັນສະໄໝຂຶ້ນເລື້ອຍໆ. ລະອຽດ ມີ ແຜນຜັງ ແລະ ບົດຄິດໄລ່ປະມານລາຄາກໍ່ສ້າງ ຕິດຄັດມາພ້ອມນີ້ ເຊິ່ງມີມູນຄ່າກໍ່ສ້າງ: **1.607.200.000 ກີບ (ໜຶ່ງຕື້ ຫົກຮ້ອຍເຈັດລ້ານ ສອງແສນ ກີບ).**

ສະນັ້ນ ທາງຄະນະພັກ-ຄະນະອຳນວຍການ ໂຮງໝໍ ບໍລິເວນ 101 ພວກເຮົາຈຶ່ງໄດ້ຮຽນນຳສະເໜີ ຂຶ້ນເຖິງ ພະນະທ່ານ ຮອງປະທານປະເທດ ແຫ່ງ ສ.ປ.ປ ລາວ ພ້ອມດ້ວຍຄອບຄົວ ເພື່ອຊ່ວຍຄົ້ນຄ້ວາ ພິຈາລະນາຕາມ ສະພາບຄວາມຈຳເປັນ ຕົວຈິງຂອງໂຮງໝໍ 101 ດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

| ກົມໃຫຍ່ ພາລາທິການ | ກົມເສນາຮັກ | ອຳນວຍການ ໂຮງໝໍ ບໍລິເວນ 101 |
|---|---|---|
| ສຸພັດ ໄພວິລິດ | ດຣ. ບຸນເຕິນ ບັນດາວົງ | ດຣ. ບົວສົງ ອິນທະວົງ |



## ຄຳເຫັນ ກ່າວມອບໂຄງການ ຂອງພັນຕີ ນາງຄຳເມິງ ວໍລະຈິດ ຜູ້ນຳພາເຕົ້າໂຮມທຶນພັດທະນາ ໂຮງໝໍ 101 ວິລະຊົນ

ຮຽນ ທ່ານ.................

ຮຽນທ່ານ ການນຳຂັ້ນສູງຂອງພັກ ຂອງລັດ
ຂັ້ນສູນກາງ ຂັ້ນແຂວງ ນາຍ ແລະພົນທະຫານ ອ້າຍນ້ອງທຸກຄົນ

ດ້ວຍຄວາມກະຕັນຍູ ຮູ້ບຸນຄຸນ ຢ່າງສຸດຊຶ້ງ ຕໍ່ແຜ່ນດິນຖິ່ນກຳເນີດ
ດ້ວຍຄວາມເຄົາລົບຮັກຢ່າງສູງສົ່ງ ລົ້ນເກົ້າເໜືອຫົວ ຕໍ່ພໍ່ແມ່ ແລະບັນພະບຸລຸດ
ດ້ວຍຄວາມຫ່ວງໃຍຕໍ່ສຸຂະພາບພະລານາໄມ ຂອງພະນັກງານນັກຮົບ ແລະພີ່ນ້ອງ ປະຊາຊົນບັນດາເຜົ່າ

ມື້ນີ້ ເປັນມື້ສັນວັນດີອີກມື້ໜຶ່ງ ໃນຊີວິດຂອງຂ້າພະເຈົ້າ ແລະ ຄອບຄົວ ເພາະເປັນມື້ທີ່ໄດ້ກັບມາມີສ່ວນຮ່ວມໃນບາດກ້າວແຫ່ງການພັດທະນາ ແລະສ້າງຜົນງານໃໝ່ຂອງໂຮງໝໍ 101 ວິລະຊົນ ແຫ່ງນີ້ ບ່ອນຊຶ່ງມີຄວາມສຳຄັນທີ່ສຸດແຫ່ງໜຶ່ງຕໍ່ຊີວິດຂອງຂ້າພະເຈົ້າ.

ຂ້າພະເຈົ້າ ຂໍຂອບໃຈ ຕໍ່ຄະນະພັກ ຄະນະບັນຊາ ຄະນະອຳນວຍການ ແລະທຸກໆທ່ານ ທີ່ໄດ້ມາຮ່ວມເປັນສັກຂີພິຍານ ໃນພິທີທີ່ມີຂຶ້ນໃນມື້ນີ້ ກ່ອນອື່ນໝົດ ຢືນຕໍ່ໜ້າໂຮງໝໍ ທີ່ໄດ້ຮັບນາມມະຍົດອັນສູງສົ່ງ ສະຫງ່າລາສີ **“ວິລະຊົນ ແຫ່ງຊາດ”** ນີ້ ຂ້າພະເຈົ້າ ຂໍເຊີນຊວນບັນດາທ່ານລຸກຂຶ້ນ ແລ້ວກົ້ມຫົວຄຳນັບ ຊົມເຊີຍ ຕໍ່ກຽດສັກສີ ແລະ ຈົດຈຳ ຈາລຶກ ເຖິງຜົນງານອັນຍິ່ງໃຫຍ່ຂອງໂຮງໝໍນີ້ ທີ່ໄດ້ປະກອບສ່ວນສຳຄັນເຂົ້າໃນພາລະກິດ ປົດປ່ອຍປະເທດຊາດອັນແສນຮັກຂອງພວກເຮົາ.



ທ່ານທັງຫຼາຍ ໃນຖານະຂອງຊາວພຸດ ພວກເຮົາມັກຈະໄດ້ເຂົ້າຮ່ວມການຖວາຍທານ ຫຼືໄດ້ຍິນຂ່າວການສ້າງກອງບຸນ ກອງກຸສົນຕ່າງໆ ເຊັ່ນ: ສ້າງສິມ ສ້າງສາລາໂຮງທຳ ຫຼືຫໍແຈກ ສ້າງກຸຕິ ໂດຍການທານເຂົ້າວັດໃຫ້ຄູບາພະສົງ ເພາະເຮົາເຊື່ອກັນວ່າຈະໄດ້ບຸນ ສ່ວນຂ່າວການທານສ້າງໂຮງຮຽນກໍພໍມີຢູ່ ແຕ່ໜ້ອຍໜັກ ໜ້ອຍໜາ ຈະໄດ້ຍິນຂ່າວການທານເພື່ອສ້າງ ຫຼື ຊ່ວຍໂຮງໝໍ ສ່ວນໃຫຍ່ວຽກພວກນີ້ມັກຕົກເປັນພາລະຂອງພາກລັດ.

ເປັນຍ້ອນຫຍັງ ? ຄົນທົ່ວໄປຈຶ່ງບໍ່ມັກທານເພື່ອສ້າງໂຮງໝໍ ທັງໆທີ່ໂຮງໝໍເປັນທີ່ເພິ່ງອັນຈຳເປັນທີ່ສຸດແຫ່ງໜຶ່ງ ໃນຊີວິດຂອງຄົນເຮົາ ອັນນີ້ ຂ້າພະເຈົ້າ ກໍບໍ່ຮູ້ເຫດຜົນດອກ ແຕ່ຄິດວ່າຄົງເປັນເພາະ ພວກເຮົາບໍ່ມັກໄປໂຮງໝໍຫັ້ນລະເນາະ ເຮົາຈະໄປໂຮງໝໍກໍຕໍ່ເມື່ອວ່າ ເຮົາ ຫຼືພີ່ນ້ອງ ເຈັບໄຂ້ໄດ້ປ່ວຍຫັ້ນລະ ແຕ່ວ່າເທື່ອນີ້ ພວກເຮົາກໍໄດ້ພ້ອມກັນມາໂຮງໝໍອີກເທື່ອໜຶ່ງ ຂ້າພະເຈົ້າ ຂໍຂອບໃຈຫຼາຍໆ ທີ່ທຸກທ່ານໄດ້ມາທີ່ນີ້ ເຖິງວ່າບໍ່ແມ່ນຮ່ວມຖວາຍທານ ແຕ່ຂ້າພະເຈົ້າ ກໍເຊື່ອວ່າ ພວກທ່ານຄົງຈະໄດ້ບຸນບໍ່ໜ້ອຍກວ່າການທານສ້າງສິມ ສ້າງຫໍແຈກ ຫຼື ກອງກະຖິນ ກອງຜ້າປ່າດອກ.

ຫຼາຍທ່ານ ອາດຈະເຫັນວ່າ ໂຮງໝໍ ເປັນພຽງບ່ອນເຮັດວຽກຂອງແພດໝໍ ປິ່ນປົວພະຍາດ ຊ່ວຍເຫຼືອຄົນເຈັບປ່ວຍ ໃຫ້ກັບມາມີສຸຂະພາບແຂງແຮງ ປົກກະຕິ. ແຕ່ສຳລັບຂ້າພະເຈົ້າແລ້ວ ໂດຍສະເພາະໂຮງໝໍວິລະຊົນແຫ່ງນີ້ ບໍ່ແມ່ນເປັນພຽງບ່ອນຊ່ວຍເຫຼືອ



ຄົນເຈັບທີ່ນັ້ນ ແຕ່ຍັງເປັນເບົ້າຫຼໍ່ຫຼອມສາວນ້ອຍ ປ. 4 ຄືຂ້າພະເຈົ້າ ໃຫ້ເປັນຄົນດີອີກດ້ວຍ ເຮັດໃຫ້ຂ້າພະເຈົ້າເປັນຄົນມີຄຸນຄ່າ, ຄືໄດ້ເປັນນາງແພດ ເປັນພະນັກງານປະຕິວັດພິເສດ ເປັນບ່ອນໄດ້ພົບຮັກ ໄດ້ສ້າງຄອບຄົວກັບ ທ່ານ ບຸນຍັງ ວໍລະຈິດ ຊຶ່ງປັດຈຸບັນເພິ່ນດຳລົງຕຳແໜ່ງ ເປັນຮອງປະທານປະເທດ ແຫ່ງ ສປປ.ລາວ ເວົ້າລວມແລ້ວ ຂ້າພະເຈົ້າ ມີຮອຍອະດີດທີ່ສຸດແສນງົດງາມ ຕິດພັນກັບໂຮງໝໍຫຼັງນີ້ ຊຶ່ງທັງໝົດນັ້ນ ມັນເປັນຕາຈົດຈຳ ແລະ ເລົ່າຂານສູ່ນ້ອງນຸ່ງ ແລະ ລູກຫຼານຟັງ.

ອັນໜຶ່ງ ຫຼາຍທ່ານ ອາດຈະມີໃບປະກາດສະນິຍະບັດ ຫຼືໃບປຣິນຍາ ຈາກສະຖາບັນການສຶກສາ ແຫ່ງໃດແຫ່ງໜຶ່ງ ຢູ່ພາຍໃນ ຫຼືຕ່າງປະເທດ ແລະກໍຈະພາກພູມໃຈເປັນພິເສດ ແຕ່ສຳລັບຂ້າພະເຈົ້າ ໂຮງໝໍແຫ່ງນີ້ ແມ່ນເປັນມະຫາວິທະຍາໄລ ແລະໄດ້ໃຫ້ໃບປະຣິນຍາແກ່ຂ້າພະເຈົ້າ ຄື: ໃບປະຣິນຍາວິຊາຊີບແພດ ທີ່ຕາມຫຼັກສາກົນແລ້ວ ແມ່ນແຕ່ໃນສະໜາມຮົບກໍຍັງຕ້ອງໃຫ້ສິດພິເສດ. ໃບປະຣິນຍານີ້ ບໍ່ສາມາດທຽບເປັນຊັ້ນຕີຣ ຊັ້ນໂທ ຊັ້ນເອກ ຫຼື ຊັ້ນໃດໆ ໄດ້ເລີຍ, ຂ້າພະເຈົ້າ ພາກພູມໃຈຫຼາຍ, ຂ້າພະເຈົ້າ ສາມາດເອກອ້າງຕໍ່ພໍ່ແມ່ ຍາດພີ່ນ້ອງ ຕໍ່ໝູ່ຄູ່ເພື່ອນມິດ ຕໍ່ລູກຫຼານ ແລະຕໍ່ຊາວໂລກໄດ້. ຂ້າພະເຈົ້າຂຽນ ແລະປ້ອງກັນວິທະຍານິພົນດ້ວຍເລືອດ ດ້ວຍມານະຈິດ ແຫ່ງຫົວໃຈທີ່ຟົດຟື້ນປະຕິວັດ, ໂດຍການຍ່າງກັບໄປ ກັບມາ ດ້ວຍຄວາມອິດເມື່ອຍ ຫິວກະຫາຍ ບໍ່ຈັກວ່າເທົ່າໃດຖ້ຽວ ເທິງຜືນແຜ່ນດິນຖິ່ນກຳເນີດ, ເອົາຊີວິດເປັນເດີມພັນ ດ້ວຍການເຈ່ຍຄົນເຈັບ ແລ່ນຜ່າຫ່າລະເບີດ, ຫ່າລູກປືນ ຂອງສັດຕູ, ແລະດ້ວຍວັນເວລາເຄິ່ງຂ້ອນຂອງຊີວິດ.



ຂ້າພະເຈົ້າ ໄດ້ຍ້າຍອອກຈາກໂຮງໝໍແຫ່ງນີ້ ໄປຮັບໜ້າທີ່ຢູ່ບ່ອນອື່ນ ຕັ້ງແຕ່ຫຼາຍປີກ່ອນພຸ້ນ ຕາມການມອບໝາຍຂອງການຈັດຕັ້ງ ພັກ-ລັດ ແຕ່ບໍ່ວ່າ ໄປຢູ່ໃສດົນນານປານໃດ ຂ້າພະເຈົ້າ ກໍຍັງຄິດຮອດ ຄິດເຖິງ ແລະຕິດຕາມການເຕີບໃຫຍ່ຂະຫຍາຍຕົວ ຂອງໂຮງໝໍແຫ່ງນີ້ຢູ່ຕະຫຼອດມາ.

ເມື່ອກາງປີ 2011 ຂ້າພະເຈົ້າໄດ້ໄປເລາະຢ້ຽມຢາມ ຍ່າງໄປຕາມຮອຍອະດີດໄປຖ້ຳຫົກ ຖ້ຳແອ້ວ ຖ້ຳຊ້າງ ຖ້ຳພະ ຖ້ຳບ້ານຕາດ ບ້ານສ້ອນ... ບາງບ່ອນຍັງຄືເກົ່າບາງບ່ອນກໍປ່ຽນແປງໄປແລ້ວ ແຕ່ວ່າ ໄປບ່ອນໃດ ຂ້າພະເຈົ້າກໍຍັງຮູ້ສຶກຄືວ່າສິ່ງຕ່າງໆຫາກໍ່ຜ່ານໄປມື້ວານ ມື້ຊືນນີ້ ຂ້າພະເຈົ້າຍັງຄິດເຫັນ ແລະ ຈື່ຈຳເຖິງບົດຮຽນຂອງຄູອາຈານ ທີ່ຖ່າຍທອດໃຫ້ ຄິດເຫັນຜ້າບັງພັນບາດ ມີດຕັດ ຊີແລ້ງສັກຢາ ວັນທີ່ອຶດຫິວວັນທີ່ອິດເມື່ອຍ ໂຮຍແຮງ ວັນທີ່ຫຍຸ້ງຍາກສັບສົນ ວັນທີ່ຄົນເຈັບໜັກຖືກສົ່ງມາເຖິງໂຮງໝໍ ຫູກໍຍັງໄດ້ຍິນສຽງຮ້ອງໄຫ້ ຄວນຄາງ ຂອງຜູ້ເຈັບປ່ວຍ, ຜູ້ຖືກລູກປືນ ຖືກລູກລະເບີດ, ດັງຍັງໄດ້ກິ່ນເຫຼົ້າເກົ້າສິບ ກິ່ນຢາເປນີຊີລິນ ແລະຂ້າພະເຈົ້າ ກໍຍັງຈື່ຈຳເຖິງຄຳເວົ້າ, ແສງຕາອ້ອນວອນຂໍຄວາມຊ່ວຍເຫຼືອຈາກເພື່ອນນັກຮົບ ຈາກປະຊາຊົນຜູ້ທຸກຍາກແລະຍັງຈື່ຈຳເຖິງເພື່ອນສະຫາຍ ອ້າຍນ້ອງ ຈື່ຈຳຄວາມຝັນ ແລະ ສັນຍາທາງໃຈຂອງຕົນກັບໝູ່ເພື່ອນ ຄວາມຮູ້ສຶກເຫຼົ່ານັ້ນບໍ່ສາມາດພັນລະນາອອກມາເປັນຄຳເວົ້າໄດ້ໝົດ.



ຍ້ອນແນວນັ້ນ ຂ້າພະເຈົ້າຈຶ່ງເວົ້າໄດ້ຢ່າງເຕັມປາກວ່າ ຂ້າພະເຈົ້າ ຮັກ ຫວງແຫນ ແລະຫ່ວງໃຍໂຮງໝໍແຫ່ງນີ້ ຂ້າພະເຈົ້າເຄີຍຄິດເອົາໄວ້ວ່າ ຖ້າມີໂອກາດ ແລະເງື່ອນໄຂ ຈະຕອບບຸນແທນຄຸນພັກ-ລັດ ແທນຄຸນໂຮງໝໍນີ້ ດັ່ງນັ້ນເມື່ອມີໂອກາດ ມີເງື່ອນໄຂ ແລະ ອີງຕາມຄວາມຮຽກຮ້ອງຕ້ອງການຂອງໂຮງໝໍ ທີ່ຍັງຂາດເຂີນພື້ນຖານວັດຖຸເຕັກນິກ ຈຳນວນໜຶ່ງ ຂ້າພະເຈົ້າຈຶ່ງຢາກປະກອບສ່ວນເຮັດອັນໃດອັນໜຶ່ງຝາກໄວ້ເປັນອະນຸສອນຂອງຕົນ ເພື່ອຈະໄດ້ຮູ້ສຶກວ່າຂ້າພະເຈົ້າຍັງສະໜິດ ຕິດພັນ ຢູ່ກັບໂຮງໝໍນີ້ ແລະ ບັດນີ້ ມີຫຼາຍທ່ານຊຶ່ງໃຈບຸນ ໄດ້ຊ່ວຍໃຫ້ຂ້າພະເຈົ້າເຮັດສິ່ງນັ້ນເກີດຂຶ້ນແລ້ວ ຄື: ຕຶກອາຄານ ແລະ ອຸປະກອນການແພດທັງໝົດ ທີ່ປາກົດຢູ່ຕໍ່ໜ້າພວກເຮົາແລ້ວ, ນະທີ່ນີ້ ຂ້າພະເຈົ້າ ຈຶ່ງຂໍຂອບໃຈ ແລະຮູ້ບຸນຄຸນ ຕໍ່ທຸກທ່ານ ທີ່ໄດ້ຊ່ວຍໃຫ້ຂ້າພະເຈົ້າໄດ້ບັນລຸຈຸດປະສົງ.

ຕຶກອາຄານ ແລະ ສິ່ງຂອງຕ່າງໆ ທີ່ຂ້າພະເຈົ້ານຳມາຊ່ວຍເຫຼືອນີ້ ຫຼາຍທ່ານອາດຈະເຫັນວ່າມັນຍິ່ງໃຫຍ່ສຳຄັນ ແລະມີມູນຄ່າຫຼາຍ... ແຕ່ສຳຫຼັບຂ້າພະເຈົ້າແລ້ວມັນເປັນພຽງສັນຍະລັກຈາກຈິດໃຈຂອງນາງແພດ ນັກຮົບຜູ້ໜຶ່ງ, ມັນທຽບບໍ່ໄດ້ກັບສິ່ງທີ່ດີງາມ ຊຶ່ງຂ້າພະເຈົ້າໄດ້ຮັບຈາກໂຮງໝໍນີ້ ແລະຍິ່ງທຽບບໍ່ໄດ້ ກັບຜົນງານ ມູນເຊື້ອອັນໃຫຍ່ຫຼວງ ແລະສະຫງ່າງາມ ຂອງໂຮງໝໍວິລະຊົນແຫ່ງນີ້, ເພາະໂຮງໝໍນີ້ ໄດ້ຊ່ວຍພະນັກງານນັກຮົບ ແລະໄດ້ຊ່ວຍຜູ້ຄົນບໍ່ຈັກວ່າທໍ່ໃດຄົນໃຫ້ພົ້ນຈາກຄວາມທຸກທໍລະມານ ເວົ້າງ່າຍໆ ກໍຄືໄດ້ສ້າງບຸນກຸສົນອັນໃຫຍ່ຫຼວງແກ່ເພື່ອນມະນຸດ ຈົນໄດ້ຮັບການເຊີດຊູກຽດວ່າ **“ວິລະຊົນ ແຫ່ງຊາດ”**

ການຊ່ວຍເຫຼືອຂອງຂ້າພະເຈົ້ານີ້ ຂໍຢ່າຖືວ່າມັນໃຫຍ່ໂຕ ແລະສຳຄັນພິເສດເລີຍ ເພາະຖ້າຖືແບບນັ້ນ ຂ້າພະເຈົ້າຈະເປັນບາບ ຂ້າພະເຈົ້າຈະກາຍເປັນຜູ້ຍິ່ງໃຫຍ່ໃນສາຍຕາຂອງທ່ານ ຊຶ່ງຜິດຈາກເຈຕະນາຂອງຂ້າພະເຈົ້າຢ່າງສິ້ນເຊີງ ຂໍໃຫ້ຖືວ່າຕຶກອາຄານ ແລະວັດຖຸເຂົ້າຂອງທີ່ນຳມາຊ່ວຍເຫຼືອນີ້ ເປັນພຽງນາງແພດຜູ້ໜຶ່ງທີ່ຊື່ ຄຳເນີງ ວໍລະຈິດ ຊຶ່ງກຽມພ້ອມຮ່ວມກັບບັນດາແພດໝໍ ເພື່ອຊ່ວຍເຫຼືອຄົນຜູ້ເຈັບປ່ວຍຢູ່ຕະຫຼອດເວລາ.

ເຖິງຂ້າພະເຈົ້າບໍ່ໄດ້ເປັນແພດປະຈຳຢູ່ນີ້ອີກແລ້ວ ກໍຂໍໃຫ້ພວກທ່ານ ແພດໝໍຮຸ່ນນ້ອງ ລູກຫຼານ ຈົ່ງຄິດວ່າ ຂ້າພະເຈົ້າຍັງຢູ່ຄຽງຂ້າງພວກທ່ານ ເຮັດວຽກຮ່ວມກັບພວກທ່ານ ຊ່ວຍເຫຼືອຊຶ່ງກັນ ແລະກັນ ຮັບໃຊ້ຊາດ ຮັບໃຊ້ປະຊາຊົນ ແລະສ້າງຜົນງານໃໝ່ໃຫຍ່ຫຼວງກວ່າເກົ່າ. ພ້ອມກັນຮັກສາມູນເຊື້ອ ແລະ ກຽດສັກສີ **"ວິລະຊົນ"** ທີ່ຊາດ ແລະປະຊາຊົນໄດ້ມອບໃຫ້ແກ່ໂຮງໝໍພວກເຮົາ.

ບັດນີ້ ໄດ້ເວລາອັນເປັນສິຣິມຸງຄຸນແລ້ວ ຂ້າພະເຈົ້າ ຂໍມອບຕຶກອາຄານ ພ້ອມວັດຖຸເຄື່ອງມືການແພດໃຫ້ພວກທ່ານນຳໃຊ້ໃຫ້ເກີດປະໂຫຍດ ນັບແຕ່ເວລານີ້ເປັນໄປ.

ຂໍຂອບໃຈ ແລະຮູ້ບຸນຄຸນທຸກທ່ານ ທີ່ໄດ້ຊ່ວຍປະກອບທຶນ ປະກອບເຫື່ອແຮງ ສະຕິປັນຍາ ໃຫ້ກາລະໂອກາດ ແລະວັດຖຸປັດໄຈຕ່າງໆ ຊ່ວຍເຮັດໃຫ້ຄວາມຝັນຄວາມຕັ້ງໃຈຂອງຂ້າພະເຈົ້າ ແລະຂອງພວກເຮົາທຸກຄົນ ໃນການພັດທະນາໂຮງໝໍ 101 ວິລະຊົນ ແຫ່ງນີ້ ສຳເລັດຜົນ ຂໍອວຍພອນໃຫ້ບັນດາທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ມີອາຍຸ ໝັ້ນຍືນ ມີຄວາມສຸກທັງໃນຊີວິດການງານແລະໃນຄອບຄົວ. ສຳລັບນັກທຸລະກິດ ກໍຂໍໃຫ້ດຳເນີນທຸລະກິດມີຜົນກຳໄລ ກ້າວໜ້າ ປະສົບຜົນສຳເລັດຢ່າງສະຫງ່າງາມ.

ຂໍອວຍພອນໃຫ້ ຄະນະອຳນວຍການ ພະນັກງານແພດໝໍທຸກຄົນ ພໍ່ແມ່ປະຊາຊົນເຮົາ ແລະການຈັດຕັ້ງ ອຳນາດການປົກຄອງທ້ອງຖິ່ນ ແລະທຸກທ່ານທີ່ມາຮ່ວມງານ ຈົ່ງຢູ່ດີມີແຮງ ພ້ອມກັນປະກອບສ່ວນ ເສີມຂະຫຍາຍມູນເຊື້ອວິລະຊົນ ຂອງແຂວງຊຽງຂວາງ ແລະໂຮງໝໍບໍລິເວນ 101 ໃຫ້ຍືນຍົງຕະຫຼອດໄປ ຂໍໃຫ້ທຸກທ່ານຈົ່ງມີຄວາມສຸກ ຄວາມຈະເລີນຕະຫຼອດໄປ.

ຂໍຂອບໃຈ



# ຄຳເຫັນກ່າວຮັບ ຕຶກນອນຄົນເຈັບພິເສດ

## ພັນເອກ ດຣ. ບົວສີງ ອິນທະວົງ
## ຫົວໜ້າອຳນວຍການໂຮງໝໍ ບໍລິເວນ 101

ຮຽນ: ທ່ານ ພົນຕີ ສຸເພັດ ໄພວິສິດ ຄະນະປະຈຳພັກ ກະຊວງປ້ອງກັນ ປະເທດ, ເລຂາຄະນະພັກອົງການກົມໃຫຍ່, ຫົວໜ້າກົມໃຫຍ່ພະລາທິການກອງທັບ ທີ່ເຄົາລົບ.

ຮຽນ: ທ່ານປ້າ ຄຳເມິງ ວໍລະຈິດ ທີ່ນັບຖື

ຮຽນ: ແຂກທີ່ມີກຽດຢ່າງສູງທຸກໆ ທ່ານ

ນັບຖືຮັກແພງ ບັນດາສະຫາຍ ຄະນະພັກ ຄະນະອຳນວຍການ ໂຮງໝໍ ບໍລິເວນ 101, ຕະຫຼອດຮອດພະນັກງານແພດໝໍ ທຸກສະຫາຍ.

ເນື່ອງໃນໂອກາດ ອັນສະຫງ່າລາສີ, ພາຍໃຕ້ບັນຍາກາດທີ່ຄຶກຄື້ນ ມ່ວນຊື່ນ ມີຄວາມໝາຍສຳຄັນພິເສດໃນມື້ນີ້, ພວກເຮົາຄະນະພັກ ຄະນະອຳນວຍການ ພ້ອມດ້ວຍພະນັກງານ ນັກຮົບ, ແພດໝໍທຸກຄົນໃນໂຮງໝໍ 101 ວິລະຊົນ ຕະຫຼອດຮອດພໍ່ແມ່ປະຊາຊົນຊາວຊຽງຂວາງ ມີຄວາມພາກພູມໃຈຢ່າງລົ້ນເຫຼືອ ທີ່ໄດ້ມີພິທີມອບ-ຮັບຕຶກພິເສດ ແລະຕຶກປິ່ນປົວປະສູດ-ພະຍາດຍິງ ທີ່ໂຮງໝໍ ບໍລິເວນ 101, ບົນຜືນແຜ່ນດິນຊຽງຂວາງ ວິລະຊົນແຫ່ງນີ້

ພິທີນີ້ ແມ່ນເຫດການທາງປະຫວັດສາດທີ່ຍິ່ງໃຫຍ່ ແລະມີຄວາມໝາຍສຸດທີ່ສຳຄັນຫາອັນປຽບປານບໍ່ໄດ້ ໃນຂະບວນວິວັດແຫ່ງການພັດທະນາຮອບດ້ານ ຂອງໂຮງໝໍ 101 ວິລະຊົນ ຂອງກະຊວງປ້ອງກັນປະເທດແຫ່ງນີ້, ຕະຫຼອດ 50 ປີ (06/02/1962-06/02/2012) ທີ່ໂຮງໝໍ 101 ໄດ້ສ້າງຕັ້ງຂຶ້ນມາ, ຊຶ່ງໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ແລະຮອບດ້ານ ພາຍໃຕ້ການຊີ້ນຳຈາກກະຊວງປ້ອງກັນປະເທດ




ແລະ ນຳພາໂດຍກົງຈາກກົມໃຫຍ່ພະລາທິການກອງທັບ ກົມເສນາຮັກ ໂດຍອີງໃສ່ຈຸດພິເສດ ຂອງແຕ່ລະໄລຍະເຊິ່ງໄດ້ເຮັດໃຫ້ໂຮງໝໍ 101 ຂອງພວກເຮົາມີການເຕີບໃຫຍ່ເຂັ້ມແຂງເປັນກ້າວໆ ມາ.

ໄລຍະຕໍ່ສູ້ກູ້ຊາດ ຕ້ານຈັກກະພັດຕ່າງດ້າວທີ່ມາຮຸກຮານ ໂຮງໝໍນີ້ ກໍໄດ້ຮັບນາມມະຍົດ ເປັນກົມກອງວິລະຊົນແຫ່ງຊາດ, ໄລຍະ 30 ປີ ແຫ່ງການພັດທະນາສ້າງສາປະເທດຊາດໂຮງໝໍ 101, ກໍໄດ້ຮັບການຍ້ອງຍໍຈາກລັດຖະບານ ຄື: ຫຼຽນໄຊອິດສະຫຼະຊັ້ນ I . ຕະຫຼອດໄລຍະ 10 ກວ່າປີ ທີ່ກະຊວງປ້ອງກັນປະເທດ ໄດ້ຍົກພາລະບົດບາດແລະໜ້າທີ່ຮັບຜິດຊອບທາງດ້ານວິຊາການ ໃຫ້ເປັນໂຮງໝໍບໍລິເວນ ເຊິ່ງເປັນໂຮງໝໍຂັ້ນ (ຂ), ຖັດຈາກ ໂຮງໝໍ 103 ທີ່ເປັນໂຮງໝໍສູນກາງຂອງກະຊວງປ້ອງກັນປະເທດ, ພວກເຮົາໄດ້ເປັນເອກະພາບພັດທະນາ, ສ້າງສາໂຮງໝໍຢ່າງຮອບດ້ານຕາມ 4 ແຜນງານໃຫຍ່ ແລະ 26 ໂຄງການ ຂອງກະຊວງປ້ອງກັນປະເທດວາງອອກ, ສະນັ້ນ ຈຶ່ງເຕີບໃຫຍ່ ແລະເຂັ້ມແຂງ ກົມກອງມີຄວາມສະຫງົບ, ກຳລັງວິຊາການ ການແພດໄດ້ຮັບການພັດທະນາສູງຂຶ້ນເທື່ອລະກ້າວ, ຊີວິດການກິນຢູ່ຂອງພະນັກງານແພດໝໍ ໄດ້ຮັບການພັດທະນາດີຂຶ້ນ, ໂຄງລ່າງພື້ນຖານ ອາຄານສະຖານທີ່ ໄດ້ຮັບການພັດທະນາແລະສ້າງສາຕາມຮູບແບບທີ່ຖາວອນ ເພື່ອຮັບຄົນເຈັບ, ໂດຍຖືກຕ້ອງ ຕາມນະໂຍບາຍຂອງພັກປະຊາຊົນປະຕິວັດລາວວາງອອກ. ຕໍ່ຂະບວນການພັດທະນາ ສ້າງສາ ທີ່ຕ້ອງການທາງ ດ້ານງົບປະມານ, ວັດຖຸ, ເງິນຄຳ ອັນມະຫາສານນີ້, ຜ່ານມາພວກ ເຮົາໄດ້ຮັບຈາກຂັ້ນເທິງ ແລະ ລວມໝູ່ ຈາກກົມກອງຂອງພວກເຮົາ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ